| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ |
| **ປະເພດເອກະສານ** | ອື່ນໆ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 02.11.2017 |
| **ພາກສ່ວນຮັບຜິດຊອບ** | ກົມຄຸ້ມຄອງທີ່ດິນ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງ ເຊົ່າ ຫລື ສຳປະທານທີ່ດິນ ຊຶ່ງໝາຍເຖິງ ການຂໍສິດໃຊ້ ທີ່ດິນຂອງລັດ ເຂົ້າໃນກິດຈະການອັນໃດອັນໜຶ່ງໄດ້ ຕາມເງື່ອນໄຂ ແລະ ກຳນົດເວລາ ຕາມເງື່ອນໄຂສັນຍາກິດຈະການລົງທຶນ ໂຄງການທີ່ມີຄວາມຕ້ອງການເຊົ່າ ແລະ ສຳປະທານທີ່ດິນຂອງລັດ ເຊັ່ນ: 1. ກິດຈະການ ອຸດສາຫະກຳ2. ກິດຈະການ ການບໍລິການໃນເຂດທ່ອງທ່ຽວ3. ກິດຈະການ ບໍລິການ ແລະ ທີ່ຢູ່ອາໄສ4. ກິດຈະການ ສະໜາມກິລາ5. ກິດຈະການ ກະສິກຳ6. ກິດຈະການ ປູກໄມ້7. ກິດຈະການ ບໍ່ແຮ່8. ກິດຈະການ ກາຊີໂນ9. ເຂດເສດຖະກິດສະເພາະ-ພິເສດ10. ແລະ ກິດຈະການອື່ນໆ ທີ່ຈະເຊົ່າ ແລະ ສຳປະທານທີ່ດິນ |
| **ເງື່ອນໄຂໃນການຂໍເອກະສານ** | 1. ການເຊົ່າ ຫລື ສຳປະທານທີ່ດິນ ສຳລັບແຕ່ລະຈຸດປະສົງ ແມ່ນຕ້ອງມີຂະໜາດບໍ່ເກີນທີ່ກຳນົດໄວ້ ສຳລັບແຕ່ລະຈຸດປະສົງດັ່ງກ່າວ ເຊັ່ນ ກິດຈະການໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ, ກິດຈະການກະສິກຳ, ກິດຈະການແຮ່ທາດ2. ໃນກໍລະນີມີຄວາມຈຳເປັນຕ້ອງທົດແທນຄືນທີ່ດິນຂອງປະຊາຊົນ ຫລື ບຸກຄົນອື່ນ, ເຈົ້າຂອງໂຄງການຕ້ອງຈ່າຍທົດແທນຄ່າເສຍຫາຍ3. ຕ້ອງເຮັດບົດວິພາກເສດຖະກິດ-ເຕັກນິກ, ບົດສຶກສາຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ຮັບການຢັ້ງຢືນຮັບຮອງຈາກຂະແໜງການກ່ຽວຂ້ອງ ລວມທັງ ໄດ້ຮັບອະນຸຍາດການລົງທຶນ ຕາມກົດໝາຍ ສຳລັບ ກິດຈະການທີ່ຂໍສຳປະທານດັ່ງກ່າວ |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ດຳລັດວ່າດ້ວຍ ການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ | 135/ນຍ | 25.05.2009 | |
| ກົດໝາຍວ່າດ້ວຍ ທີ່ດິນ (ສະບັບປັບປຸງ) | 70/ສພຊ | 21.06.2019 | |
| ລັດຖະບັນຍັດຂອງປະທານປະເທດ ສປປ ລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ | 003/ປທທ | 26.12.2012 | |
| ລັດຖະດຳລັດຂອງປະທານປະເທດ ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ | 02/ປປທ | 18.11.2009 | |
| ຂໍ້ຕົກລົງວ່າດ້ວຍທຸລະກິດກ່ຽວກັບທີ່ດິນ(2022) | 4392/ກຊສ | 25.08.2022 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |

| | | |
|---|---|---|
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| **ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ** | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| **ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ** | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| **ຮູບແບບການຍື່ນເອກະສານ** | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມຄຸ້ມຄອງທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | |
| **ໄລຍະເວລາໃນການພິຈາລະນາຄຳຮ້ອງ (ວັນ)** | 5 | ພາຍຫຼັງ ທີ່ລັດຖະບານໄດ້ອະນຸຍາດໃຫ້ມີການລົງທຶນໂດຍເຊັນສັນຍາສຳປະທານແລ້ວ ພາຍໃນ 5 ວັນລັດຖະການແມ່ນຈະໄດ້ອອກໃບອະນຸຍາດສິດນຳໃຊ້ທີ່ດິນຂອງລັດໃຫ້ແກ່ຜູ້ພັດທະນາ |

| **ການຕໍ່ອາຍຸເອກະສານ** | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 0 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ການຕໍ່ໃບອະນຸຍາດ<br>ແມ່ນອີງຕາມການສະເໜີຂໍຕໍ່ອາຍຸສຳປະທານໂຄງການ,<br>ຖ້າວ່າໂຄງການດັ່ງກ່າວໄດ້ຮັບອະນຸຍາດສຳປະທານ 30 ປີ<br>ແລ້ວຜູ້ພັດທະນາສະເໜີຂໍຕໍ່ ອີກ 20 ປີ<br>ໃບອະນຸຍາດກໍຈະສາມາດຕໍ່ໄດ້ອີກ 20 ປີ ຕາມສັນຍາສຳປະທານ |

| ຄ່າທຳນຽມສຳລັບການຍື່ນຂໍເອກະສານ | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 50000.00 | 0.00 | 50000.00 |
| **Comments** | ການເກັບຄ່າທຳນຽມການອອກໃບອະນຸຍາດໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ ແມ່ນແຍກຕ່າງຫາກຈາກ ຄ່າເຊົ່າ ຫລື ຄ່າສຳປະທານທີ່ດິນລັດ ທີ່ຜູ້ເຊົ່າ ຫລື ຜູ້ຂໍສຳປະທານ ຈະຕ້ອງຈ່າຍ ພາຍໃຕ້ສັນຍາເຊົ່າ ຫລື ສັນຍາສຳປະທານທີ່ດິນລັດ ຊຶ່ງຈະຕ້ອງໄດ້ຈ່າຍ ໂດຍສອດຄ່ອງກັບ ອັດຕາທີ່ລະບຸໄວ້ໃນ ລັດຖະດຳລັດຂອງປະທານປະເທດ ເລກທີ 002/ປປທ.- ການເກັບຄ່າເຊົ່າ, ຄ່າສຳປະທານທີ່ດິນຂອງລັດ ແມ່ນປະຕິບັດຕາມ ລັດຖະບັນຍັດ ຂອງປະທານ ປະເທດ ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ສະບັບເລກທີ 02/ປປທ, ລົງວັນທີ 18 ພະຈິກ 2009.- ການເກັບຄ່າໃບອະນຸຍາດນຳໃຊ້ທີ່ດິນຂອງລັດ ແມ່ນຈະເກັບຕາມ ລັດຖະບັນຍັດ ຂອງປະທານ ປະເທດ ວ່າດ້ວຍຄ່າທຳນຽມ ແລະ ການບໍລິການ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012. | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳ ນຽມເພີ່ມເຕີມ** | | | | |

| ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 50000.00 | 0.00 | 50000.00 |
| **ຄຳເຫັນ** | ການເກັບຄ່າທຳນຽມການອອກໃບອະນຸຍາດໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ ແມ່ນແຍກຕ່າງຫາກຈາກ ຄ່າເຊົ່າ ຫລື ຄ່າສຳປະທານທີ່ດິນ ທີ່ຜູ້ເຊົ່າ ຫລື ຜູ້ຂໍສຳປະທານ ຈະຕ້ອງຈ່າຍ ພາຍໃຕ້ສັນຍາເຊົ່າ ຫລື ສັນຍາສຳປະທານທີ່ດິນລັດ ຊຶ່ງຈະຕ້ອງໄດ້ຈ່າຍ ໂດຍສອດຄ່ອງກັບ ອັດຕາທີ່ລະບຸໄວ້ໃນ ລັດຖະດຳລັດປະທານປະເທດ ເລກທີ 002/ປປທ.- ການເກັບຄ່າເຊົ່າ, ຄ່າສຳປະທານທີ່ດິນຂອງລັດ ແມ່ນປະຕິບັດຕາມ ລັດຖະບັນຍັດ ຂອງປະທານ ປະເທດ ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ສະບັບເລກທີ 02/ປປທ, ລົງວັນທີ 18 ພະຈິກ 2009.- ການເກັບຄ່າໃບອະນຸຍາດນຳໃຊ້ທີ່ດິນຂອງລັດ ແມ່ນຈະເກັບຕາມ ລັດຖະບັນຍັດ ຂອງປະທານ ປະເທດ ວ່າດ້ວຍຄ່າທຳນຽມ ແລະ ການບໍລິການ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |

| | |
|---|---|
| **ຄຳ ເຫັນກ່ຽວກັບຄ່າ<br>ທຳ<br>ນຽມຕໍ່ອາຍຸເພີມເຕີມ** | |